# ສົ່ງຂ່າວຫາເພື່ອນຫຼັກເຈັດ

ນັບຈາກວັນ ແຕ່ນັ້ນມາ ທີ່ເຮົາຈາກ
ໄດ້ພັດພາກ ໃກເພື່ອນມິຕ ຈິດຜູກພັນ
ວິທະຍາລັຍ ຄູຣຫຼັກເຈັດ ເຂດແຂວງສວັນ
ສະຖາບັນ ສຶກສາຣູ້ ຄູຣທີ່ດີ

ຈາກວັນນັ້ນ ເຖິງວັນນີ້ ຫຼາຍປີລັບ
ລ່ວງເລີຍນັບ ເຂົ້າເຂດຂ້າມ ສາມສິບປີ
ເຮົາຕ່າງຄົນ ທົນອາວອນ ຈອນໄລໜີ
ຫຼາຍຊີວີ ໄດ້ສູນຫາຍ ຕາຍຈາກກັນ

ເຄີຍຮ່ວມຮຽນ ຮ່ວມສຶກສາ ຫາຄວາມຮູ້
ເຄີຍຮ່ວມຢູ່ ໃນຫໍພັກ ຮັກແພງກັນ
ເຂົ້າຮ່ວມແລງ ແກງຮ່ວມໝໍ້ ຫໍອາຫານ
ຄວາມຜູກພັນ ສັນນ້ອງພີ່ ມີຈິດຈາງ

ນານແສນນານ ສືບສາວກັນ ຈຶ່ງຮູ້ຂ່າວ
ຮູ້ເຣື່ອງຣາວ ການເປັນຢູ່ ສູ່ເສັ້ນທາງ
ຮັກສາໄວ້ ໄມຕຣີຈິດ ບໍ່ຈືດຈາງ
ຢ່າປ່ອຍວາງ ສືບສານກໍ່ ຕໍ່ຍາວໄປ

ເດືອນມີນາ ທີສິບສອງ ຮ້ອງປະກາດ
ປວັດສາດ ຈາຣຶກໄວ້ ໃຈທຸກຄົນ
ເທື່ອທຳອິດ ມິດຫຼັກເຈັດ ທຸກແຫ່ງຫົນ
ຫຼາຍຫຼາຍຄົນ ເຮົາມຸ້ງໜ້າ ມາຫາກັນ

ຍ້ອນເຊັ່ນນີ້ ຈຶ່ງປະສານ ຮ່ວມກັນຄິດ
ຫວັງພໍ້ມິດ ພົບສະຫາຍ ເຮົາຫຼາຍຄົນ
ເມືອງກຸງວລ໌ເບີຕ ສອງພັນຫ້າ ປະກົດຜົລ
ຫວັງທຸກຄົນ ໄດ້ມາຮ່ວມ ປະສານໃຈ

ຂໍເຊີນຊວນ ອວນທຸກຄົນ ໃຫ້ມີຫນ້າ
ສອງພັນຫ້າ ໃຫ້ເປັນປີ ມີຄວາມຫມາຍ
ຢ່າພັ້ງພາດ ຫາໂອກາດ ໃຫ້ໄດ້ໄປ
ມິດສະຫາຍ ເພື່ອນທີ່ຄອຍ ພອຍຍິນດີ

ອາດຈະເປັນ ໂອກາດດຽວ ໃນຊີວິດ
ໄດ້ໃກ້ຊິດ ຫວນບັນຈົບ ພົບເທື່ອນີ້
ເຮົາທຸກຄົນ ມີຈິດໃຈ ຜູກໄມຕຣີ
ຮ່ວມສຸຂຂີ ຮ່ວມສຸຂສັນ ວັນຂອງເຮົາ

See you all in OUR REUNION 2005, Gilbert, AZ